# ກຳນົດໝາຍໜ້າວຽກ

# ກ່ຽວກັບການຈັດຕັ້ງກົນໄກການປະສານງານ

# ເພື່ອການຄຸ້ມຄອງຕົວເມືອງ

## ມາດຕາ 1 ຈຸດປະສົງ

ກຳນົດໝາຍໜ້າວຽກສະບັບນີ້ ເປັນພາສາອັງກິດ " Terms of reference " ກຳນົດຫຼັກການ, ການເຄື່ອນໄຫວ, ການຈັດຕັ້ງກົນໄກການປະສານງານເພື່ອການຄຸ້ມຄອງຕົວເມືອງ, ໂດຍປະສານສົມທົບກັບທຸກຂະແໜງການທີ່ກ່ຽວຂ້ອງ ການຈັດຕັ້ງດັ່ງກ່າວມີໜ້າທີ່ແກ້ໄຂບັນຫາການພັດທະນາຕົວເມືອງລົງສູ່ປະຊາຊົນຢ່າງກວ້າງຂວາງ ແລະ ໂປ່ງໃສ.

## ມາດຕາ 2 ການຈັດຕັ້ງກົນໄກການປະສານງານ ເພື່ອການຄຸ້ມຄອງຕົວເມືອງ

1. ການຈັດຕັ້ງກົນໄກການປະສານງານ ເພື່ອຄຸ້ມຄອງຕົວເມືອງ ກົນໄກຈຶ່ງມີຈຸດປະສົງແນໃສ່ ເພື່ອປຶກສາຫາລື ແລະ ແລກປ່ຽນຄຳຄິດຄຳເຫັນ ກ່ຽວກັບ ນະໂຍບາຍ ແລະ ບັນຫາການພັດທະນາຕົວເມືອງຮ່ວມກັບພາກລັດ, ເອກະຊົນ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງ ເປັນຕົ້ນ ປະຊາຊົນ, ບໍລິສັດເອກະຊົນ, ແລະ ການຈັດຕັ້ງອື່ນແນໃສ່ຈັດຕັ້ງກອງປະຊຸມສຳມະນາ ກ່ຽວກັບ ລະບົບຂໍ້ມູນຂ່າວສານ.

2. ພາຍໃຕ້ກອບຂອງໂຄງການສ້າງຂີດຄວາມສາມາດໃນການ ສົ່ງເສີມ ແລະ ຄຸ້ມຄອງການພັດທະນາຕົວເມືອງວຽງຈັນ ທີ່ໄດ້ຮັບການຊ່ວຍເຫຼືອຈາກອົງການໄຈກ້າ, ກະຊວງໂຍທາທິການ ແລະ ຂົນສົ່ງແຕ່ງຕັ້ງຄະນະປະສານງານໂຄງການສ້າງຂີດຄວາມສາມາດໃນການ ສົ່ງເສີມ ແລະ ຄຸ້ມຄອງ ການພັດທະນາຕົວເມືອງວຽງຈັນ ຕາມຂໍ້ຕົກລົງ ສະບັບເລກທີ 13043/ຍທຂ, ລົງວັນທີ 03 ກໍລະກົດ 2021 ເປັນຜູ້ຮັບຜິດຊອບໂດຍກົງໃນການຈັດຕັ້ງກົນໄກການປະສານງານ ເພື່ອການຄຸ້ມຄອງຕົວເມືອງ.

## ມາດຕາ 3 ນະໂຍບາຍຂອງລັດກ່ຽວກັບການພັດທະນາຕົວເມືອງ

1. ລັດສົ່ງເສີມ ແລະ ພັດທະນາຕົວເມືອງດ້ວຍການຕອບສະໜອງງົບປະມານ, ພາຫະນະ, ອຸປະກອນທີ່ຈຳເປັນ, ຍົກລະດັບຄວາມຮູ້, ຄວາມສາມາດໃຫ້ບຸກຄະລາກອນຜັງເມືອງ ໃຫ້ມີຄວາມເຂັ້ມແຂງ.

2. ລັດສົ່ງເສີມທຸກພາກສ່ວນເສດຖະກິດທັງ ພາຍໃນ ແລະ ຕ່າງປະເທດ ລົງທຶນໃສ່ການສ້າງແຜນຜັງຕົວເມືອງ, ຜັງຈັດສັນຄຸ້ມໃໝ່ລວມທັງການລົງທຶນໃສ່ການກໍ່ສ້າງລະບົບໂຄງລ່າງພື້ນຖານທາງດ້ານເຕັກນິກ ແລະ ສັງຄົມ ເພື່ອຈັດຕັ້ງປະຕິບັດແຜນຜັງລວມ ແລະ ແຜນຜັງລະອຽດຂອງຕົວເມືອງ.

3. ລັດຊຸກຍູ້ ແລະ ສົ່ງເສີມທຸກພາກສ່ວນເສດຖະກິດໃຫ້ເຂົ້າເຖິງແຫຼ່ງທຶນ ເພື່ອພັດທະນາການຜັງເມືອງ, ສ້າງຄວາມເຂັ້ມແຂງ ແລະ ຄວາມສາມາດ, ຮັບປະກັນການພັດທະນາຕົວເມືອງປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ໃຫ້ມີການຂະຫຍາຍຕົວຢ່າງຕໍ່ເນື່ອງ, ໝັ້ນທ່ຽງ, ຕາມທິດສີຂຽວ ແລະ ຍືນຍົງ.

## ມາດຕາ 4 ການຮ່ວມມືສາກົນ

ລັດສົ່ງເສີມ ແລະ ເປີດກວ້າງການຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບການຜັງເມືອງດ້ວຍການແລກປ່ຽນບົດຮຽນ, ຂໍ້ມູນຂ່າວສານ, ວິທະຍາສາດ, ເຕັກນິກ ແລະເຕັກໂນໂລຊີ, ການສ້າງ, ການບຳລຸງ, ການຍົກລະດັບດ້ານວິຊາການ ໃຫ້ແກ່ພະນັກງານ, ການຮ່ວມມືດ້ານການລົງທຶນ ແລະ ການປະຕິບັດສົນທິສັນຍາ ແລະ ສັນຍາສາກົນທີ່ ສປປ ລາວ ເປັນພາຄີ.

## ມາດຕາ 5 ການຈັດຕັ້ງກົນໄກການປະສານງານ ເພື່ອການຄຸ້ມຄອງຕົວເມືອງ

ກະຊວງໂຍທາທິການ ແລະ ຂົນສົ່ງ ເປັນຜູ້ຊີ້ນຳໂດຍກົງ ໃນການຈັດຕັ້ງກົນໄກການປະສານງານ ເພື່ອການຄຸ້ມຄອງຕົວເມືອງ.

ການຈັດຕັ້ງກົນໄກການປະສານງານ ເພື່ອການຄຸ້ມຄອງຕົວເມືອງປະກອບດ້ວຍ:

1. ຮອງຫົວໜ້າສະຖາບັນຄົ້ນຄວ້າໂຍທາທິການ ແລະ ຂົນສົ່ງ ເປັນຫົວໜ້າ
2. ຮອງຫົວໜ້າກົມເຄຫາ ແລະ ຜັງເມືອງ ເປັນຮອງ
3. ຮອງຫົວໜ້າຫ້ອງວ່າການນະຄອນຫຼວງວຽງຈັນ ເປັນຄະນະ
4. ຕາງໜ້າກະຊວງການເງິນ ເປັນຄະນະ
5. ຕາງໜ້າກະຊວງແຜນການ ແລະ ການລົງທຶນ ເປັນຄະນະ
6. ຕາງໜ້າພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມນະຄອນຫຼວງວຽງຈັນ ເປັນຄະນະ
7. ຕາງໜ້າພະແນກໂຍທາທິການ ແລະ ຂົນສົ່ງນະຄອນຫຼວງວຽງຈັນ ເປັນຄະນະ
8. ກອງເລຂາຄະນະຊີ້ນຳໂຄງການ ສ້າງຂີດຄວາມສາມາດໃນການ ສົ່ງເສີມ ແລະ ຄຸ້ມຄອງການພັດທະນາຕົວເມືອງ ເປັນກອງເລຂາ

**ມາດຕາ 6 ສິດ ແລະ ໜ້າທີ່ຂອງ ການຈັດຕັ້ງກົນໄກການປະສານງານເພື່ອການຄຸ້ມຄອງຕົວເມືອງ**

ການຈັດຕັ້ງກົນໄກການປະສານງານເພື່ອການຄຸ້ມຄອງຕົວເມືອງມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຊີ້ນຳລວມ, ລາຍງານຜົນການຈັດຕັ້ງປະຕິບັດກົນໄກການປະສານງານເພື່ອການຄຸ້ມຄອງຕົວເມືອງ ໃຫ້ຂັ້ນເທິງຮັບຊາບ ແລະ ພິຈາລະນາ;
2. ສະເໜີຂັ້ນເທິງແຕ່ງຕັ້ງ ຄະນະເຮັດວຽກ ຫຼື ຜູ້ຊ່ວຍວຽກຊົ່ວຄາວ ຂອງກົນໄກການປະສານງານເພື່ອການຄຸ້ມຄອງບົນພື້ນຖານຄວາມເປັນເອກະພາບ ຂອງຄະນະຂອງຄະນະຈັດຕັ້ງກົນໄກການປະສານງານເພື່ອການຄຸ້ມຄອງຕົວເມືອງ;
3. ແລກປ່ຽນຂໍ້ມູນຂ່າວສານ ແລະ ຄຳຄິດຄຳເຫັນກ່ຽວກັບບັນຫາການພັດທະນາຕົວເມືອງ ກັບຂະແໜງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນໆ ທີ່ກ່ຽວຂ້ອງ;
4. ສຶກສາ ແລະ ຄົ້ນຄວ້າ ບັນຫາກ່ຽວກັບ ການພັດທະນາຕົວເມືອງ;
5. ຄົ້ນຄວ້າເພື່ອສະເໜີ ສ້າງກົນໄກການປະສານງານທີ່ ສອດຄ່ອງ ແລະ ເໝາະສົມ ເພື່ອການພັດທະນາຕົວເມືອງ;
6. ຈັດຕັ້ງກອງປະຊຸມສຳມະນາກ່ຽວກັບການພັດທະນາ ແລະ ຄຸ້ມຄອງຕົວເມືອງ;
7. ຈັດພິມສື່ສິ່ງພິມ ແລະ ຈັດຕັ້ງໂຄສະນາເຜີຍແຜ່ ກ່ຽວກັບ ການພັດທະນາຕົວເມືອງ.

ທຸກການຈັດຕັ້ງປະຕິບັດ ສິດ ແລະ ໜ້າທີ່ ທີ່ກ່າວມາຂ້າງເທິງນັ້ນ ຕ້ອງຢູ່ບົນພື້ນຖານການປະສານກົມກຽວກັນຢ່າງເປັນລະບົບຄົບຊຸດ ລະຫວ່າງຂັ້ນສູນກາງ ແລະ ທ້ອງຖິ່ນ.

**ມາດຕາ 7 ກອງປະຊຸມຂອງການຈັດຕັ້ງກົນໄກການປະສານງານ ເພື່ອການຄຸ້ມຄອງຕົວເມືອງ**

1. ໃນຕະຫຼອດໄລຍະ ຂອງການຈັດຕັ້ງປະຕິບັດໂຄງການ, ກອງປະຊຸມການຈັດຕັ້ງກົນໄກການປະສານງານ ເພື່ອການຄຸ້ມຄອງຕົວເມືອງຈະຈັດຂຶ້ນທັງໝົດ 8 ຄັ້ງ ລວມທັງ ການຈັດຕັ້ງເປີດກອງປະຊຸມສຳມະນາ ໃນກໍລະນີທີ່ມີຄວາມຈຳເປັນ ກໍສາມາດເປີດກອງປະຊຸມວິສາມັນໄດ້;
2. ພາຍໃຕ້ການເປັນປະທານ ຫົວໜ້າຄະນະຈັດຕັ້ງປະຕິບັດກົນໄກການປະສານງານເພື່ອການຄຸ້ມຄອງຕົວເມືອງຈະຮຽກຄະນະ ເຂົ້າຮ່ວມກອງປະຊຸມຂອງການຈັດຕັ້ງ;
3. ໃນວາລະຂອງທຸກກອງປະຊຸມ ຄະນະຈັດຕັ້ງປະຕິບັດກົນໄກການປະສານງານ ເພື່ອການຄຸ້ມຄອງຕົວເມືອງ, ກອງເລຂາຈະຕ້ອງເປັນຜູ້ບັນທຶກກອງປະຊຸມໃນທຸກຄັ້ງ;
4. ໃນກໍລະນີຕິດຂັດດ້ວຍເຫດຜົນໃດກໍ່ຕາມຫົວໜ້າ ຫຼື/ແລະ ຫົວໜ້າກອງເລຂາຕ້ອງແຕ່ງຕັ້ງຄະນະຂອງຕົນເພື່ອຮັບໜ້າທີ່ຊົ່ວຄາວແທນພ້ອມສັ່ງໂຈະການເຮັດວຽກຂອງພະນັກງານທີ່ບໍ່ສາມາດປະຕິບັດໜ້າທີ່ຂອງຕົນໄດ້;
5. ກອງປະຊຸມຂອງການຈັດຕັ້ງກົນໄກການປະສານງານ ເພື່ອການຄຸ້ມຄອງຕົວເມືອງ ປະກອບດ້ວຍຫົວໜ້າ, ຄະນະ ແລະ ກອງເລຂາ ລວມປະມານ 10 ທ່ານ;

6. ທຸກການຕັດສິນບັນຫາ ຕ້ອງຢູ່ບົນພື້ນຖານ ຂໍ້ສະເໜີ, ການປຶກສາຫາລື, ແລກປ່ຽນຄໍາຄິດຄໍາເຫັນ ເປັນເອກະພາບ ປະຕິບັດຫຼັກການສຽງສ່ວນໜ້ອຍ ຂຶ້ນກັບສຽງສ່ວນຫຼາຍ.

**ມາດຕາ 8 ບົດບັນທຶກ ແລະ ການເຜີຍແຜ່**

1. ກອງເລຂາຮັບຜິດຊອບບັນທຶກຂອງທຸກກອງປະຊຸມ ແລ້ວສົ່ງຈົດໝາຍວຽນໃຫ້ຄະນະ ເພື່ອມີຄໍາເຫັນເປັນເອກະພາບ ແລະ ຮັບຮອງເອົາບັນທຶກກອງປະຊຸມເປັນແຕ່ລະ. ພາຍຫຼັງທີ່ໄດ້ຖືກຮັບຮອງບັນທຶກກອງປະຊຸມຕ້ອງນໍາສົ່ງລົງໃນເວັບໄຊສພາຍໃນ ແລະ ເວັບໄຊສອື່ນ. ບັນທຶກກອງປະຊຸມມີຜົນນໍາໃຊ້ໃນໄລຍະ 3 ປີ;
2. ບົດສັງລວມ, ບົດບັນທຶກກອງປະຊຸມ ຈະຕ້ອງເອົາໄປນໍາສະເໜີອອກຢູ່ໃນສື່ສິ່ງພິມ ພາຍຫຼັງທີ່ໄດ້ກວດກາທາງດ້ານເນື້ອໃນແລ້ວ.

**ມາດຕາ 9 ການດັດແກ້ ຫຼື ການຍົກເລີກ**

1. ບົນພື້ນຖານການທາບທາມ ແລະ ເຫັນດີເປັນເອກະພາບຂອງຄະນະຈັດຕັ້ງກົນໄກການປະສານງານ ເພື່ອການຄຸ້ມຄອງຕົວເມືອງ, ກະຊວງໂຍທາທິການ ແລະ ຂົນສົ່ງ ຮັບຮອງເອົາການດັດແກ້, ປັບປຸງ ຫຼື ລົບລ້າງ ກໍານົດໝາຍໜ້າວຽກກ່ຽວກັບການຈັດຕັ້ງກົນໄກການປະສານງານ ເພື່ອການຄຸ້ມຄອງຕົວເມືອງ;
2. ພາຍຫຼັງທີ່ການຈັດຕັ້ງປະຕິບັດ ກໍານົດໝາຍສະບັບນີ້ ສິ້ນສຸດລົງຕາມໄລຍະເວລາທີ່ໄດ້ກໍານົດໄວ້, ການສືບຕໍ່ຈັດຕັ້ງກົນໄກການປະສານງານ ເພື່ອການຄຸ້ມຄອງຕົວເມືອງຕ້ອງຢູ່ບົນພື້ນຖານການປຶກສາຫາລື ແລະ ການປັບປຸງກໍານົດໝາຍສະບັບນີ້ໃຫ້ສອດຄ່ອງ.

**ມາດຕາ 10 ຜົນສັກສິດ**

ກໍານົດໝາຍສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ນະຄອນຫຼວງວຽງຈັນ, ວັນທີ 31 ມັງກອນ 2022

ຫົວໜ້າ ກົມເຄຫາ ແລະ ຜັງເມືອງ

ທ່ານ ປອ ວຽງນາມ ດວງພະຈັນ

ຫົວໜ້າ ສະຖາບັນຄົ້ນຄວ້າ ໂຍທາທິການ ແລະ ຂົນສົ່ງ

ທ່ານ ນາງ ພອນສະຫວັນ ແພງສີດາ

ຫົວໜ້າ ພະແນກ ໂຍທາທິການ ແລະ ຂົນສົ່ງ ນະຄອນຫຼວງ

ທ່ານ ສຸລິວັນ ພົມມະຫາໄຊ

# Terms of Reference For

# Urban Management Platform

## Article 1. Purpose

These Terms of Reference ("Terms of Reference") define the necessary provisions for the Urban Management Platform ("UMP"), established to address urban development issues in a cross-sectoral initiative, for promoting sustainable urban development that is open and transparent to citizens.

## Article 2. Definition

1. UMP is the mechanism for discussion and sharing the views on the policy and issues of urban development not only with the public sector but also with other stakeholders such as citizens, private companies, and institutions. This includes holding meetings and seminars as well as developing ICT-based information sharing system.

2. UMP is hereby established by MPWT, and administered by Urban and Building Working Groups on Project for Capacity Development on the JICA Urban Development Control and Promotion ("CDUDCP"), by the decree of the minister of Public Works and Transports by the decree of the minister of public works and transports No. 13043 / PWT, dated 03 July 2021

## Article 3. Policy toward Urban Development

1. The government promotes urban development by supporting the necessary budget, facilities, capacity building to the staff of urban planning.

2. The government promotes the internal and external economic sectors in the investing urban development to realize urban planning and detailed planning as well as technical and social infrastructures in order to implement the general and detailed urban plan.

3. The government promotes the public economy sectors for accessing to budgets in order to develop the urban planning, capacity building, ensure that the urban development contributing to the graduated, stable and greened socio-economic development.

## Article 4. External and International Cooperation

The government promotes open external, regional, and international cooperation concerning urban planning by sharing experiences, information and scientific, technologies, technical capacity building, investment and implementation of agreement and international convention that Lao PDR ratified

## Article 5. Organization

Under the direction of the Ministry of Public Works and Transports, the organization of UMP consists of:

| | |
|---|---|
| 1. Deputy Director, Public Works and Transport Research Institute | as a Chairperson |
| 2. Deputy Director, Department of Housing and Urban Planning | as a Vice Chairperson |
| 3. Deputy Director of Vientiane Cabinet | as a member |
| 4. Representative of the Ministry of Finance | as a member |

5. Representative of the Ministry of Planning and Investment as a member

6. Representative of Department of Natural Resources and Environment of Vientiane Capital as a member

7. Representative of Department of Public Work and Transport of Vientiane Capital as a member

8. Secretary of the Joint Coordination Committee of CDUDCP as a member

**Article 6. Rights and Duties of Urban Management Platform**

The UMP is subjected to the following rights and duties:

1. To lead and report on the outcomes of duties and authorities implementation of UMP to the superior for consideration and approval.

2. To propose to the superior for appointing additional/temporary members of UMP upon agreement of the UMP members.

3. To share information and discuss of urban development issues beyond sectors, fields, local authorities and other organization concerned

4. To research and study on Issues on urban development and urban management

5. To propose the information sharing mechanism for urban development

6. To hold seminars for urban development

7. To publicize Newsletter of UMP and disseminate urban development

The execution of the right and duties in the above activities shall be conducted by cooperation with both members of central and local levels.

**Article 7. Meeting of Urban Management Platform**

1. The meeting of UMP shall be held 8 times including open seminars during the period. Notwithstanding the foregoing, a special meeting may be held as needed.

2. The Chairperson shall call meetings and become a chair of the meetings of the UMP.

3. The Secretariat shall take minutes of the meetings of UMP.

4. If the Chairperson and/or the Secretariat are/is not available to attend a meeting or meetings for any reason whatsoever, a Member or Members, who has/have been appointed by the Chairperson, shall take over the duties of the unavailable officer(s). The member who shall not perform his/her duties could be dismissed by unanimously.

5. A quorum shall consist of the Chairperson, the Secretariat, total 10 of Member(s).

6. The decisions of matters presented/discussed at a meeting shall be carried by a majority.

**Article 8. Minutes and Newsletters.**

1. Minutes of a meeting shall be prepared by the Secretariat, and shall be circulated and approved by unanimously in the sequential meeting. The approved minutes shall be posted in the internal webpage etc. Minutes shall be kept for the period of 3 years.

2. The summary of meeting shall be reported in the newsletters, which shall be published after reviewing its contents

**Article 9. Amendments or Cancellation.**

1. Any amendment, revision, or cancellation of the Terms of Reference shall be approved by Ministry of Public Work and Transport for the Terms of Reference upon agreement of the core members of UMP.

2. At the end of the period, the continuation of UMP will be discussed and the Terms of Reference will be revised.

**Article 10: Effective Date**

This term of reference is effective from the day it is signed.

Vientiane Capital, 31 January 2022

Dr. Viengnam DOUANGPHACHANH

Director General

Department of Housing and Urban Planning, Ministry of Public Works and Transport

Ms. Phonesavanh PHENGSYDA

Director General

Public Works and Transport Research Institute, Ministry of Public Works and Transport

Mr. Soulivanh PHOMMAHASAY

Director General

Department of Public Works and Transport, Vientiane Capital